# ແຜນການສອນ
## ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 17 ທັນວາ 2006 ( 12-17-2006 )

## <u>ຄວາມຮັກທີ່ຍືນນານ:</u>

**<u>ຂໍ້ພຣະຄັມພີໃນບົດຮຽນ:</u>** 1 ໂກຣິນໂທ 13:1-13
**<u>ພຣະຄັມພີແຫ່ງຄວາມຈິງ:</u>** ການມອບຄວາມຮັກ-ສ່ວນຕົວໃຫ້ ແມ່ນການສະແດງອອກທີ່ສູງສຸດຂອງຊີວິດຄຣິສຕຽນ.
**<u>ຜົນສະທ້ອນຕໍ່ຊີວິດ:</u>** ບົດຮຽນນີ້ໄດ້ຂຽນຂຶ້ນເພື່ອຊ່ວຍທ່ານໃຫ້ປະສົບການຊີວິດ-ທີ່ມີການສັບປ່ຽນພອນສວັນຂອງພຣະເຈົ້າໂດຍ:

- ການສຳຣວດຜົນວ່າທ່ານເຮັດດີຊ່ຳໃດ ໃນການສະແດງອອກເຖິງຄວາມຮັກຂອງພຣະເຈົ້າ ແລະ
- ການຕັດສິນໃຈເດັດຂາດທີ່ຈະສະແດງຄວາມຮັກຂອງພຣະເຈົ້າໃນທຸກ ໆ ດ້ານ ແລະໃນສາຍສັມພັນທັງໝົດຂອງທ່ານ.

### ການຈັດຕຽມຂອງຄຣູ

1. ອະທິຖານຂໍການຊີ້ນຳຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັມພີແລະບົດຮຽນ
2. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນຳໄປສອນ
4. ອ່ານ "**<u>ແຜນການສອນ</u>**", ໝາຍບ່ອນສຳຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບຫລືຕົວຢ່າງຈິ່ງຈົດບັນທຶກໄວ້
5. ເຮັດກອບປີ້(ສຳເນົາ) ບົດຮຽນຂອງນັກຮຽນ ໃຫ້ພຽງພໍກັບຈຳນວນນັກຮຽນ

### ແຜນການສອນ

1. ___ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ
2. ___ສຳຣວດຈຳນວນນັກຮຽນ ຖາມຂ່າວຫາຜູ້ຂາດເພື່ອຈະໄດ້ສົ່ງຂ່າວຫາແລະອະທິຖານເພື່ອ
3. ___ຖາມນັກຮຽນວ່າເຂົາເຈົ້າໄດ້ຮຽນເຣື່ອງຫຍັງໃນວັນທິດທີ່ຜ່ານມາ ເພື່ອລື້ມຄືນຄວາມຊົງຈຳ
4. ___ໃຫ້ນັກຮຽນຄົນນຶ່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ, ຄຳພຍານສັ້ນໆ
5. ___ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນແລະຜູ້ຂາດການຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ

### <u>ບົດນຳ:</u>

1. ໃຫ້ນັກຮຽນແບ່ງປັນເລັກນ້ອຍວ່າເຂົາເຈົ້າມີປະສົບການກັບຄວາມຮັບຂອງພຣະເຈົ້າແນວໃດແດ່?
2. **ຖາມ**: ເຮົາຈະແບ່ງປັນຄວາມຮັກດັ່ງກ່າວນີ້ຂອງພຣະເຈົ້າໃຫ້ກັບຄົນອື່ນຢ່າງໃດ?
3. ການມອບຄວາມຮັກສ່ວນຕົວ ແມ່ນການສະແດງອອກທີ່ສູງສຸດຂອງຊີວິດຄຣິສຕຽນ.
4. ອັຄສາວົກໂປໂລໄດ້ແນະນຳພວກເຮົາວ່າ: ແຕ່ລະມື້ໃຫ້ຄຶດກ່ອນຈະເວົ້າ, ກ່ອນຈະເຮັດຈະທຳ ແລະເວລາເຮົາໃຫ້ເຫດຜົນຕ່າງ ໆ.

## 1. ຄວາມຈຳເປັນຂອງຄວາມຮັກ: ( 1ໂກຣິນໂທ 13:1-3 )

1) ຂໍໃຫ້ນັກຮຽນອາສາສມັກອ່ານ 1 ໂກຣິນໂທ 13:1-3

2) **ອະທິບາຍ:** ພຣະຄຳທີ່ອ່ານມານີ້ໄດ້ຊີ້ບອກເຖິງການດຳຣົງຊີວິດ, ອັຄສາວົກໂປໂລໄດ້ເວົ້າວ່າ: ພາສາຫຍັງກໍຕາມທີ່ເຮົາເວົ້າ ໃນການເທສນາກໍດີ, ການສັ່ງສອນກໍດີ, ການກະທຳ, ການມີຈິດໃຈດີ ແລະການມອບໃຫ້ ຈະຕ້ອງມີຄວາມຮັກ.

3). ໃຫ້ນັກຮຽນຜູ້ນຶ່ງອະທິບາຍເຣື່ອງການມອບໃຫ້ແລະການຕອບສນອງ; ຂຽນຄຳຖາມໃສ່ກະດານ: "ຄວາມຮັກໄດ້ມີສ່ວນກ່ຽວຂ້ອງກັບສິ່ງເຫລົ່ານີ້ບໍ່?" ນຳເອົາເຣື່ອງຄວາມຮັກທີ່ກ່ຽວພັນກັບພຣະເຈົ້າມາສົນທະນາ, ອະທິບາຍແຕ່ລະຈຸດໃຫ້ເຂົ້າໃຈ.

4). ສິ່ງທີ່ພວກເຮົາສົນໃຈແລະຕ້ອງການທີ່ສຸດນັ້ນກໍຄືຄວາມຮັກ.

5). ພວກເຮົາຄວນໃຫ້ພຣະເຈົ້າສະແດງຄວາມຮັກໂດຍຜ່ານການດຳຣົງຊີວິດຂອງພວກເຮົາ.

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:** 1 ໂກຣິນໂທ 13:1-3

1) ແມ່ນຫຍັງເປັນຈຸດສຳຄັນສູງສຸດຫລືຈຸດພິເສດຂອງຄວາມຮັກ?

2) ໃນການດຳຣົງຊີວິດຂອງພວກເຮົາ ເຮົາພົບກັບບັນຫາຄືກັນກັບພີ່ນ້ອງຊາວໂກຣິນໂທທີ່ໂປໂລເວົ້າຫລືບໍ່?

3) ຕົວຢ່າງຈາກການປະສົບການຂອງທ່ານ ໃນການເວົ້າທີ່ບໍ່ມີຄວາມຮັກກັບການເວົ້າທີ່ມີຄວາມຮັກ ມີຄວາມແຕກຕ່າງກັນຢ່າງໃດ?

4) ພຣະເຈົ້າໄດ້ໃຫ້ຄວາມຮັກແກ່ທ່ານຢ່າງໃດ?

5) ທ່ານຈະໃຫ້ຜູ້ທີ່ທ່ານພົບເຫັນ ຮູ້ຈັກຄວາມຮັກທີ່ທ່ານໄດ້ໃຫ້ແກ່ເຂົາຢ່າງໃດ?

## 2. ການປະຕິບັດຂອງຄວາມຮັກ: ( 1 ໂກຣິນໂທ 13:4-7)

1) ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານພຣະທັມ 1 ໂກຣິນໂທ 13:4-7

2) ໃຫ້ນັກຮຽນຂີດກ້ອງໃນບົດຮຽນຂອງເຂົາ ບ່ອນທີ່ເຂົາເຫັນວ່າມີບັນຫາທີ່ຈະຕ້ອງປະຕິບັດ,

3) ເຮົາສາມາດເຮັດໃຫ້ການດຳຣົງຊີວິດຂອງພວກເຮົາໃຫ້ເໝືອນກັບພຣະເຢຊູຄຣິດດ້ວຍຄວາມຮັກທີ່ສະແດງອອກມາຢ່າງຈິງໃຈ..

4) ເຮົາຄວນປະຕິບັດຄວາມຮັກຂອງພຣະເຈົ້າຢູ່ໃນຊີວິດເຮົາ, ຖ້າເຮົາຫາກດຳຣົງຊີວິດໃນຄວາມຮັກຂອງພຣະເຈົ້າ ພຣະອົງຈະນຳພາເຮົາເຂົ້າສູ່ການປະຕິບັດຄວາມຮັກ.

5) **ຄຳຖາມ:** (1). ແມ່ນອັນໃດທີ່ເປັນບັນຫາຂອງທ່ານທີ່ສະທ້ອນເຖິງຄວາມໃຈຮ້ອນ? ຄວາມໃຈຮ້າຍ? ຄວາມບໍ່ເມດຕາປານີ? (2). ໃນຫົວໃຈຂອງທ່ານມີຄວາມອິດສາບໍ? ທ່ານມີຄວາມຈອງຫອງບໍ? ທ່ານເຄີຍສະແດງທ່າທີອັນບໍ່ສຸພາບບໍ? ທ່ານເຫັນແກ່ຕົວບໍ່? ທ່ານຈະເກັບຮັກສາຄວາມແຄ້ນນີ້ໄວ້ບໍ? ຫລັງຈາກໃຫ້ນັກຮຽນແບ່ງປັນສິ່ງເຫລົ່ານີ້ຊຶ່ງກັນແລະກັນແລ້ວໃຫ້ຊ່ວຍກັນຫາວິທີແກ້ໄຂ.

3). ໃນຂໍ້ທີ 4-7 ແມ່ນບັນຫາໃດທີ່ທ່ານຈະຕ້ອງເອົາມາປະຕິບັດກ່ອນ ແລະປະຕິບັດສືບຕໍ່ໄປ?

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ** 1 ໂກຣິນໂທ13:4-7

1. ໃນຂະນະທີ່ທ່ານອ່ານພຣະຄຳນີ້ຢູ່ ທ່ານໄດ້ຮູ້ວ່າພຣະເຈົ້າກຳລັງເວົ້າຫຍັງກັບທ່ານ?
2. ມີຄວາມຜິດອັນໃດທີ່ທ່ານສາມາດປັບປຸງໃຫ້ຖືກຕ້ອງໄດ້?
3. ຖ້າມີຄົນເຮັດຜິດຕໍ່ທ່ານແລະຂໍອະພັຍຈາກທ່ານເດ ທ່ານຈະອະພັຍໃຫ້ເຂົາໄດ້ບໍ່?
4. ການກະທຳ, ການຈຽມຕົວຂອງທ່ານບາງເທື່ອໄດ້ສະແດງເຖິງເຈຕນາດີຫລືດ້ວຍຄວາມຈິງໃຈບໍ່?

## 3. ຄວາມໝັ້ນຄົງຖາວອນຂອງຄວາມຮັກ: ( 1 ໂກຣິນໂທ 13:8-13

1) ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ 1 ໂກຣິນໂທ 13:8-13

2) ໃຫ້ນັກຮຽນຂີດວົງອ້ອມຄຳວ່າ " **ຄວາມຮັກຕັ້ງຢູ່ບໍ່ຂາດຈັກເທື່ອ** " ໃນເຈັ້ຽບົດຮຽນ.

3) ໃຫ້ນັກຮຽນມີໂອກາດເວົ້າຄຳພຍານເຣື່ອງຄວາມຮັກໝັ້ນຄົງຖາວອນ.

4) ໝູນໃຈໃຫ້ນັກຮຽນທຸກຄົນທວນຄິດເຖິງຄຳເວົ້າຂອງແມ່ຫລືພໍ່ທີ່ມີຢູ່ໃນຄວາມຊົງຈຳຂອງຕົນ, ບາງເທື່ອອາດຈະເປັນຮູບຂອງອ້າຍຫລືນ້ອງຂອງເຂົາເຈົ້າໃນຂະນະທີ່ກຳລັງຈະເຣີນເຕີບໃຫຍ່, ບາງທີອາດຈະເປັນບັດອວຍພອນ ຫລືເປັນຈົດໝາຍເກົ່າ ໆ ທີ່ເກັບໄວ້ໃນແອບຫລືຫີບ ຫລືວ່າພຣະຄັມພີຂອງເຂົາເຈົ້າທີ່ຂາດແລ້ວ ນຳມາເວົ້າຫລືອະທິບາຍເພື່ອເປັນຄຳພຍານທີ່ດີສຳລັບຄວາມຊົງຈຳທີ່ກ່ຽວກັບຄວາມຮັກອັນໝັ້ນຄົງຖາວອນຂອງເຂົາເຈົ້າ.

5) ໃຫ້ຜູ້ນຶ່ງອາສາສມັກອ່ານພຣະທັມ ໂຢຮັນ 3:16, ຢູດາ21, 1 ໂຢຮັນ 4:16 ທີ່ເວົ້າເຖິງຄວາມຮັກຂອງພຣະເຈົ້າ ນຳມາປຽບທຽບໃສ່ພຣະຄຳ 1 ໂກຣິນໂທ 13:8-13 ວ່າ:

6) ພຣະເຈົ້າໄດ້ຊົງໃຫ້ຄຳສັນຍາຕໍ່ຜູ້ທີ່ມີຄວາມຮັກພຣະອົງໄວ້ຢ່າງໃດ? ຄຳຕອບນັ້ນກໍຄື: ບໍ່ມີສິ່ງໃດສາມາດແຍກເຮົາອອກຈາກຄວາມຮັກຂອງພຣະເຈົ້າໄດ້: ພຣະອົງໄດ້ຊົງສົ່ງພຣະເຢຊູຄຣິດມາກໍເພາະພຣະອົງຊົງຮັກພວກເຮົາພວກເຮົາໄດ້ຖືກຮັກສາໄວ້ໂດຍຄວາມຮັກຄວາມເມດຕາຂອງພຣະອົງຊົ່ວນິຣັນດອນ ແລະພວກເຮົາໄດ້ມາຮູ້ຈັກຄວາມຮັກໝັ້ນຄົງຖາວອນຂອງພຣະເຈົ້າ ແລະເຊື່ອຟັງໃນຄວາມຮັກນັ້ນ.

7) ທ່ານເຊື່ອບໍ່ວ່າຄວາມຮັກຂອງພຣະເຈົ້າຈະບໍ່ມີສິ້ນສຸດ?

8) ຖ້າມີຄົນຖາມທ່ານວ່າ ຄວາມຮັກແມ່ນຫຍັງ? ທ່ານຈະຕອບເຂົາວ່າຢ່າງໃດ?

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນ:** 1 ໂກຣິນໂທ 13:8-13

1 ຈະມີຫວັງເກີດຂຶ້ນໃນຊີວິດຂອງທ່ານ ຖ້າທ່ານເຊື່ອວ່າພຣະເຈົ້າຊົງຮັກທ່ານ ແລະຄວາມຮັກຂອງພຣະອົງບໍ່ສິ້ນສຸດ?

2 ທ່ານຈະເປັນພຍານແນວໃດ ວ່າຄວາມຮັກຂອງພຣະເຈົ້າໝັ້ນຄົງຕລອດໄປ?

3). ທ່ານຈະແບ່ງປັນຄວາມຮັກຂອງພຣະເຈົ້າກັບຄົນອື່ນແນວໃດ?

**<u>ສລູບ</u>:**

1. ໝູນໃຈໃຫ້ນັກຮຽນເລີ້ມຕົ້ນປະພຶດຕົນສະແດງຄວາມຮັກຢ່າງນຶ່ງຫລືຫລາຍກວ່ານັ້ນໃນຊີວິດຈິງຂອງຄວາມຮັກຂອງເຂົາເຈົ້າ
2. ໃຫ້ນັກຮຽນສະແດງຄວາມຮັກອັນແທ້ຈິງອອກກັບຄົນທີ່ຢູ່ພາຍໃນຄອບຄົວຂອງເຂົາເຈົ້າ
3. ໝູນໃຈໃຫ້ນັກຮຽນສັຣເສີນພຣະເຈົ້າທຸກວັນ ໃນຄວາມຮັກຂອງພຣະອົງ ຊຶ່ງເປັນຄວາມຮັກອັນບໍ່ຮູ້ສິ້ນສຸດ
4. ອະທິຖານປິດຫ້ອງຮຽນ.

ລາວຊາວເທີນບັບຕິສສັມພັນ ແປແລະຮຽບຮຽງໂດຍ J.H.

.